# ເອກະສານຂໍ້ມູນຄວາມຈິງຂອງກົດລະບຽບອາຫານໝາຍເລກ 9

*ສິ່ງທີ່ທ່ານຄວນຮູ້ກ່ຽວກັບກົດລະບຽບ*

WWW.HEALTHOREGON.ORG/
FOODSAFETY

## ເຂດທີ່ກໍານົດວ່າສາມາດນໍາໝາລ້ຽງ ເຂົ້າໄປບ່ອນນັ່ງທີ່ກາງແຈ້ງໄດ້

### OAR 333-150-0000, ພາກທີ 6-501.115

(E) ໝາແມ່ນອາດຈະໄດ້ຮັບອະນຸຍາດໃຫ້ຢູ່ໃນເຂດນັ່ງດ້ານນອກຂອງບ່ອນເຮັດອາຫານພາຍໃຕ້ເງື່ອນໄຂດັ່ງຕໍ່ໄປນີ້:

(1) ຮ້ານທີ່ດໍາເນີນກິດຈະການປຸງແຕ່ງອາຫານກະກຽມຂັ້ນຕອນທີ່ເປັນລາຍລັກອັກສອນທີ່ລວມເອົາ:

(a) ແຜນວາດເຂດດ້ານນອກທີ່ໄດ້ຈັດສັນໃຫ້ສໍາລັບລູກຄ້າທີ່ມາກັບໝາຂອງເຂົາ;Pf

(b) ຂັ້ນຕອນຂອງຮ້ານທີ່ດໍາເນີນກິດຈະການປຸງແຕ່ງອາຫານແມ່ນເພື່ອໃຫ້ຮັບປະກັນວ່າພະນັກງານບໍ່ຈັບ, ລ້ຽງ ຫຼື ດູແລໝາ ແລະ ທໍາຄວາມສະອາດທັນທີຖ້າໝາຖ່າຍໜັກ ຫຼື ຖ່າຍເບົາ. ຂັ້ນຕອນຕ້ອງໄດ້ອະທິບາຍສະຖານທີ່ເກັບມ້ຽນອຸປະກອນ ແລະ ວັດສະດຸຕ່າງໆທີ່ຈໍາເປັນໃນການອະນາໄມໃນກໍລະນີທີ່ຕ້ອງໄດ້ຈັດການກັບຂີ້ ຫຼື ຍ່ຽວຂອງໝາ;Pf ແລະ

(c) ຂັ້ນຕອນຂອງຮ້ານທີ່ດໍາເນີນກິດຈະການປຸງແຕ່ງອາຫານແມ່ນເພື່ອແຈ້ງພະນັກງານ ແລະ ຜູ້ບໍລິໂພກກ່ຽວກັບຂໍ້ກໍານົດຕ່າງໆໃນວັກນີ້.Pf

(2) ໝາອາດຈະບໍ່ໄດ້ຮັບອະນຸຍາດໃຫ້ເອົາເຂົ້າມາພົວພັນກັບຈານອາຫານ, ເຄື່ອງໃຊ້ ແລະ ອຸປະກອນເທິງໂຕະ. ໝາອາດຈະບໍ່ໄດ້ຮັບອະນຸຍາດໃຫ້ຂຶ້ນເທິງຕັ່ງນັ່ງ, ໂຕະ ແລະ ເຄື່ອງເຟີນີເຈີອື່ນໆ.Pf

(3) ພະນັກງານ ແລະ ຜູ້ບໍລິໂພກແມ່ນບໍ່ໄດ້ຮັບອະນຸຍາດໃຫ້ອາຫານໝາ.Pf

(4) ໝາຕ້ອງໄດ້ມີເຊືອກມັດ ແລະ ຕ້ອງໄດ້ຢູ່ພາຍໃຕ້ການດູແລຂອງຜູ້ບໍລິໂພກຕະຫຼອດເວລາ.Pf

(5) ຫ້າມບໍ່ໃຫ້ໝາຍ່າງຜ່ານເຂົ້າທາງໃນ ຫຼື ເຂດທາງນອກທີ່ບໍ່ໄດ້ຮັບອະນຸຍາດຂອງຮ້ານທີ່ດໍາເນີນກິດຈະການປຸງແຕ່ງອາຫານ.Pf

### ເຫດຜົນດ້ານສາທາລະນະສຸກ :

ຄວາມປອດໄພດ້ານສຸຂະພາບລວມເອົາ; ສັດລ້ຽງຖ່າຍລົງພື້ນ, ພະນັກງານຈັບຕ້ອງສັດລ້ຽງ ແລະ ບໍ່ລ້າງມື, ໝາກິນອາຫານຢູ່ຈານຂອງຜູ້ບໍລິໂພກ ແລະ ປະພຶດບໍ່ເໝາະສົມ. ໃນການປະເມີນຄວາມສ່ຽງດ້ານສຸຂະພາບ, ຂະແໜງສາທາລະນະສຸກໄດ້ກໍານົດປະເພດການຈັດການກິນອາຫານຢູ່ສະຖານທີ່ດ້ານນອກວ່າມີຄວາມສ່ຽງຕໍ່າ, ໜ້ອຍສຸດ ແລະ ບໍ່ມີຄວາມສ່ຽງເລີຍຢູ່ໃນສະຖານທີ່ສາທາລະນະ. ໃນສະຖານທີ່ດັ່ງກ່າວນີ້, ເຈົ້າຂອງຮ້ານອາຫານອະນຸຍາດໃຫ້ໝາຢູ່ໃນເຂດຮັບປະທານອາຫານທາງນອກໄດ້ແຕ່ຕ້ອງມີການປະຕິບັດຕາມຄໍາແນະນໍາເພື່ອຫຼຸດຜ່ອນຄວາມສ່ຽງ. ບໍ່ມີການປ່ຽນແປງມາຢູ່ເຂດຮັບປະທານອາຫານທີ່ຢູ່ພາຍໃນ. ສັດລ້ຽງທີ່ສາມາດອະນຸຍາດໃຫ້ນໍາ

ການຕັ້ງກົດໃໝ່ນີ້ແມ່ນເຮັດໃຫ້ຜູ້ບໍລິການອາຫານສາມາດຫາບ່ອນນັ່ງຢູ່ນອກສໍາລັບລູກຄ້າທີ່ຢາກຮັບປະທານອາຫານຮ່ວມກັບໝາເຂົາເຈົ້າໄດ້ນັ່ງ. ຮ້ານທີ່ດໍາເນີນກິດຈະການປຸງແຕ່ງອາຫານທີ່ຕ້ອງການອະນຸຍາດໃຫ້ສັດເຂົ້າມາໃນຮ້ານໄດ້ຕ້ອງໄດ້ມີຂັ້ນຕອນທີ່ຂຽນເປັນລາຍລັກອັກສອນທີ່ສະແດງໃຫ້ເຫັນຄວາມກັງວົນບັນຫາສຸຂະພາບຈະມີການແກ້ໄຂບັນຫາແນວໃດກ່ອນການອະນຸຍາດໃຫ້ບຸກຄົນນໍາໝາຂອງເຂົາເຈົ້າມາ.

ຂໍ້ມູນລຸ່ມນີ້ຕ້ອງໄດ້ມີໃຫ້:

1. ແຜນວາດ,ແລະ ຄໍາອະທິບາຍເຂດການນັ່ງຮັບປະທານອາຫານຢູ່ເຂດພາຍນອກເພື່ອມີໃຫ້ຜູ້ທີ່ຕ້ອງການເອົາໝາມານໍາ..

2. ແນບສໍາເນົານະໂຍບາຍສໍາລັບພະນັກງານຂອງຮ້ານທັງໝົດທີ່ກ່າວໄວ້ວ່າ "ຫ້າມພະນັກງານຈັບ, ລ້ຽງ, ຫຼື ມີໄວ້ໃນຄອບຄອງໃນຂະນະທີ່ , ບໍລິການອາຫານ ແລະ ເຄື່ອງດື່ມ, ການຈັດການກັບເຄື່ອງ, ເທິງໂຕ ", ແລະ "ສໍາຜັດກັບສິ່ງປະຕິກູນຈາກໝາໂດຍອຸບັດຕິເຫດຕ້ອງໄດ້ຮັບການລ້າງມືທັນທີ". ນະໂຍບາຍຕ້ອງໄດ້ອະທິບາຍສະຖານທີ່ເກັບອຸປະກອນສໍາລັບສິ່ງເສດເຫຼືອຈາກໝາ.

3. ອະທິບາຍວິທີໃນການແຈ້ງພະນັກງານ ແລະ ຜູ້ບໍລິໂພກ ວ່າການບໍລິການອາຫານດັ່ງນີ້:

- ໝາຈະຕ້ອງບໍ່ເຂົ້າມາພົວພັນກັບຄົນທີ່ກໍາລັງບໍລິການອາຫານ, ເຄື່ອງໃຊ້ ແລະ ອຸປະກອນໂຕະ. ຜູ້ບໍລິໂພກຕອນຮັກສາໝາຂອງຜູ້ກ່ຽວ ແລະ ໃຫ້ຄວາມຄຸມຕອນຫຼອດເວລາ.

- ບໍ່ອະນຸຍາດໃຫ້ໝາຂຶ້ນເທິງໂຕະ, ຕັ່ງ,ແລະ ອະປະກອນອື່ນໆ.



*ອານຸຍາດໃຫ້ໝາມາລະຍາດດີ*

- ບໍ່ອະນຸຍາດໃຫ້ໝາຍ່າງຜ່ານເຂົ້າມາດ້ານໃນ ຫຼື ເຂດດ້ານນອກທີ່ບໍລິການອາຫານເດັດຂາດ. ໝາທີ່ໃຫ້ບໍລິການ **ແມ່ນ**ອະນຸຍາດໃຫ້ເຂົ້າດ້ານໃນໄດ້.

- ໝາທີ່ສະແດງຄວາມເປັນອັນຕະລາຍ,ຫຼື ອັນຕະລາຍແມ່ນຫ້າມບໍ່ໃຫ້ເອົາເຂົ້າມາເດັດຂາດ. ຮ້ານທີ່ດໍາເນີນກິດຈະການປຸງແຕ່ງອາຫານອາດຈະບໍ່ໃຫ້ໝາເຂົ້າມາໃນສະຖານທີ່.



Oregon Health Authority